ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 12 /ສພຂ.ຊຍ
ໄຊຍະບູລີ, ວັນທີ 17 ເມສາ 2026

# ມະຕິ
## ກອງປະຊຸມຂອງສະພາປະຊາຊົນແຂວງ
## ວ່າດ້ວຍ ການຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ
## ແລະ ແຜນງົບປະມານແຫ່ງລັດ 5 ປີ (2026-2030) ຂອງແຂວງໄຊຍະບູລີ

- ອີງຕາມ ມາດຕາ 57 ຂອງກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ສະບັບເລກທີ 57/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມ ບົດລາຍງານຂອງຄະນະກຳມະການປົກຄອງແຂວງ ໃນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V, ວັນທີ 9 ເມສາ 2026.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນ ຢ່າງກ້ວາງຂວາງ ແລະ ເລິກເຊິ່ງ ດ້ວຍຄວາມຮັບຜິດຊອບສູງ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານຂອງຄະນະກຳມະການປົກຄອງແຂວງ ກ່ຽວກັບທິດທາງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ 5 ປີ (2026-2030) ໃນວາລະກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V, ໃນລະຫວ່າງວັນທີ 9-10 ເມສາ 2026.

ກອງປະຊຸມຕົກລົງ:

**ມາດຕາ 1** ຮັບຮອງເອົາທິດທາງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 5 ປີ (2026-2030) ຂອງແຂວງ

ກອງປະຊຸມເຫັນດີເປັນເອກະພາບຕໍ່ກັບການລາຍງານຂອງຄະນະກຳມະການປົກຄອງແຂວງ ແລະ ຮັບຮອງເອົາ 7 ທິດທາງລວມ, 6 ເປົ້າໝາຍ, 23 ແຜນວຽກຈຸດສຸມ ແລະ 25 ໂຄງການບຸລິມະສິດ ຂອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ 5 ປີ (2026-2030) ຊຶ່ງມີບັນດາຄາດໝາຍດັ່ງນີ້:

1. ຄາດໝາຍດ້ານເສດຖະກິດມະຫາພາກ

1) ການເຕີບໂຕເສດຖະກິດ

ຄາດໝາຍໂຄງປະກອບຂະແໜງເສດຖະກິດ: ສູ້ຊົນເຮັດໃຫ້ເສດຖະກິດຂະຫຍາຍຕົວເພີ່ມຂຶ້ນ ສະເລ່ຍ ໃນລະດັບ 6% ຂຶ້ນໄປ, ລວມຍອດຜະລິດຕະພັນພາຍໃນ (GDP) ໃນປີ 2030 ໃຫ້ບັນລຸ 29.328 ຕື້ກີບ, ສະເລ່ຍຕໍ່ຫົວຄົນໃຫ້ໄດ້ 3.200 ໂດລາສະຫາລັດຕໍ່ປີ, ໃນນີ້:

+ ຂະແໜງກະສິກຳ ຂະຫຍາຍຕົວ ສະເລ່ຍໃນລະດັບ 5,6%;
+ ຂະແໜງອຸດສາຫະກຳ ຂະຫຍາຍຕົວ ສະເລ່ຍໃນລະດັບ 7,16%;
+ ຂະແໜງບໍລິການ ຂະຫຍາຍຕົວ ສະເລ່ຍໃນລະດັບ 5,77%;

+ ພາສີ-ອາກອນ ສະເລ່ຍໃນລະດັບ 2,35%.

ຮອດປີ 2030 ສູ້ຊົນໃຫ້ໂຄງປະກອບເສດຖະກິດ ຂະແໜງກະສິກຳ ກວມເອົາ 48,31%; ຂະແໜງອຸດສາຫະກຳ ກວມເອົາ 27,1%; ຂະແໜງບໍລິການ ກວມເອົາ 23,2% ແລະ ພາສີ-ອາກອນ ກວມເອົາ 1,39% ຂອງລວມຍອດຜະລິດຕະພັນພາຍໃນ (GDP).

2) ດ້ານງົບປະມານ

- ລາຍຮັບງົບປະມານ ເທົ່າກັບ 14% ຂອງ GDP ເມື່ອຮອດປີ 2030; ລວມລາຍຮັບງົບປະມານ 5 ປີ ໃຫ້ບັນລຸ 14.625,47 ຕື້ກີບ, ສະເລ່ຍລາຍຮັບເພີ່ມຂຶ້ນ 2% ຕໍ່ປີ ໃນນີ້:
- ລາຍຮັບພູດສູນກາງ 7.193,56 ຕື້ກີບ;
- ລາຍຮັບພາຍໃນ 7.431,90 ຕື້ກີບ;
- ລາຍຈ່າຍບໍ່ໃຫ້ເກີນ 3-5% ຂອງ GDP ຮອດປີ 2030 ລາຍຈ່າຍລວມ 5 ປີ ບໍ່ໃຫ້ເກີນ 4.125,57 ຕື້ກີບ; ສະເລ່ຍລາຍຈ່າຍເພີ່ມຂຶ້ນ 3% ຕໍ່ປີ;
- ຄາດຄະເນການປະຕິບັດ ງົບປະມານແຫ່ງລັດ ກາຍເປັນແຂວງກຸ້ມຕົນເອງ ແລະ ເກີນດຸນ ຄາດຄະເນ ໃນ 5 ປີ ດຸ່ນດ່ຽງໃຫ້ສູນກາງ ໃຫ້ໄດ້ 3.306,33 ຕື້ກີບ.

3) ດ້ານແຫຼ່ງທຶນເພື່ອການພັດທະນາ

ລະດົມແຫຼ່ງທຶນເພື່ອການພັດທະນາ ໃນແຕ່ລະປີ ບໍ່ໃຫ້ຫຼຸດ 20% ຂອງລວມຍອດຜະລິດຕະພັນພາຍໃນ (GDP) ໃນນີ້:

+ ການລົງທຶນຂອງລັດ ບໍ່ໃຫ້ຫຼຸດ 7% ຂອງການລົງທຶນທັງໝົດ;
+ ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ບໍ່ໃຫ້ຫຼຸດ 5% ຂອງການລົງທຶນທັງໝົດ;
+ ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ບໍ່ໃຫ້ຫຼຸດ 55% ຂອງການລົງທຶນທັງໝົດ;
+ ການລົງທຶນອື່ນໆ ບໍ່ໃຫ້ຫຼຸດ 33% ຂອງການລົງທຶນທັງໝົດ.

2. ຄາດໝາຍຂອງຂະແໜງການ

2.1. ກະສິກຳ ແລະ ສິ່ງແວດລ້ອມ

1) ກະສິກຳ

- ຜະລິດເຂົ້າບໍ່ໃຫ້ຫຼຸດ 200.000 ໂຕນຕໍ່ປີ;
- ຜະລິດພືດສະບຽງອາຫານບໍ່ໃຫ້ຫຼຸດ 160.000 ໂຕນຕໍ່ປີ, ບໍລິໂພກພືດຜັກ ສະເລ່ຍໃຫ້ໄດ້ 80 ກິໂລ/ຄົນ/ປີ; ບໍລິໂພກໝາກໄມ້ ສະເລ່ຍໃຫ້ໄດ້ 40 ກິໂລ/ຄົນ/ປີ;
- ການຜະລິດພືດເປັນສິນຄ້າ ບໍ່ໃຫ້ຫຼຸດ 2,5 ລ້ານໂຕນ/ປີ;
- ສູ້ຊົນເຮັດໃຫ້ຝູງສັດລ້ຽງຂະຫຍາຍຕົວສະເລ່ຍ 5%; ການລ້ຽງປາ, ສັດນ້ຳຂະຫຍາຍຕົວ 3-4%;
- ຜົນຜະລິດລວມ ຊີ້ນ, ໄຂ່, ປາ ສະເລ່ຍ 46.000 ໂຕນ/ປີ; ອັດຕາການບໍລິໂພກ ຊີ້ນ, ປາ ແລະ ໄຂ່ ສະເລ່ຍ 34.000 ໂຕນ ສະເລ່ຍໃສ່ພົນລະເມືອງແມ່ນໃຫ້ບັນລຸ 75 ກິໂລ/ຄົນ/ປີ.

2) ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

- ສຳຫຼວດ ແລະ ຈັດສັນ ປ່າສະຫງວນ, ປ່າປ້ອງກັນ ໃຫ້ໄດ້ 578.214 ເຮັກຕາ ຫຼື ເທົ່າກັບ 66%;
- ສູ້ຊົນໃຫ້ເນື້ອທີ່ປ່າປົກຫຸ້ມ ໃຫ້ໄດ້ 70%;
- ສ້າງບ້ານພັດທະນາດ້ານປ່າໄມ້ ໃຫ້ໄດ້ 46 ບ້ານ;
- ສູ້ຊົນຜັນຂະຫຍາຍແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂັ້ນແຂວງ ມາເປັນຂັ້ນເມືອງໃຫ້ໄດ້ 04 ເມືອງ, ຈັດສັນທີ່ດິນຂັ້ນບ້ານໃຫ້ໄດ້ 52 ບ້ານ, ຕິດຕາມກວດກາ-ປະເມີນຜົນຄືນ ການຈັດສັນທີ່ດິນຂັ້ນບ້ານ ໃຫ້ໄດ້ 110 ບ້ານ;



สแกนด้วย CamScanner

- ສູ້ຊົນຈັດຕັ້ງປະຕິບັດວຽກຂຶ້ນທະບຽນອອກໃບຕາດິນໃຫ້ໄດ້ 36.000 ຕອນ ແລະ ເກັບກຳຂໍ້ມູນຕົວເລກສຳມະໂນພາສີທີ່ດິນໃຫ້ໄດ້ 7.000 ຕອນ;
- ສ້າງແຜນຄຸ້ມຄອງອ່າງຮັບນ້ຳຂະໜາດນ້ອຍ ທີ່ຂັ້ນເມືອງຄຸ້ມຄອງ ໃຫ້ໄດ້ 05 ອ່າງ (ອ່າງນ້ຳຄອບ, ອ່າງນ້ຳສິງ, ອ່າງນ້ຳງາມ, ອ່າງນ້ຳລາຍ, ອ່າງນ້ຳປາ).

2.2. ອຸດສາຫະກຳ ແລະ ການຄ້າ

1) ອຸດສາຫະກຳ

- ການຂະຫຍາຍຕົວການຜະລິດດ້ານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເພີ່ມຂຶ້ນສະເລ່ຍ 7-9% ຕໍ່ປີ;
- ມູນຄ່າການຜະລິດດ້ານອຸດສາຫະກຳ-ຫັດຖະກຳ ໃຫ້ບັນລຸ 2.048 ຕື້ກີບ ເມື່ອຮອດປີ 2030;
- ມູນຄ່າການຈຳໜ່າຍດ້ານອຸດສາຫະກຳ-ຫັດຖະກຳ ໃຫ້ບັນລຸ 2.594 ຕື້ກີບ ເມື່ອຮອດປີ 2030;
- ຜະລິດໄຟຟ້າຈາກພະລັງງານນ້ຳຕົກ ແລະ ແສງຕາເວັນ ໃຫ້ໄດ້ຫຼາຍກວ່າ 150 MW;
- ຂະຫຍາຍລະບົບຈຳໜ່າຍໄຟຟ້າໃຫ້ກວມເອົາ 100% ຂອງຈຳນວນບ້ານໃນທົ່ວແຂວງ ແລະ ຫຼາຍກວ່າ 99% ຂອງຈຳນວນຄອບຄົວໃນທົ່ວແຂວງໃຫ້ໄດ້ຊົມໃຊ້ໃນລະບົບໄຟຟ້າ;
- ຊຸກຍູ້ໂຄງການຜະລິດໄຟຟ້າເອກະຊົນ ດຳເນີນການຜະລິດເປັນປົກກະຕິ ແລະ ເຕັມກຳລັງ ໃຫ້ໄດ້ຫຼາຍກວ່າ 103.743,93 GWh;
- ຊື້ພະລັງງານຈາກພາຍໃນໃຫ້ໄດ້ທັງໝົດ 1.263,27 GWh ແລະ ຈຳໜ່າຍກະແສໄຟຟ້າ ໃຫ້ໄດ້ທັງໝົດ 1.168,21 GWh;
- ຄຸ້ມຄອງການຂຸດຄົ້ນແຮ່ທາດ ຖ່ານຫີນ ໃຫ້ໄດ້ 72,50 ລ້ານໂຕນ, ແຮ່ມັງການ ໃຫ້ໄດ້ 266.000 ໂຕນ, ຫີນປູນ ໃຫ້ໄດ້ 1,82 ລ້ານໂຕນ, ແຮ່ຄຳເຂັ້ມຂຸ້ນຂັ້ນຕົ້ນ ໃຫ້ໄດ້ 1,32 ລ້ານໂຕນ.

2) ການຄ້າ

- ມູນຄ່າສົ່ງອອກສິນຄ້າໄປຕ່າງປະເທດ ບໍ່ໃຫ້ຫຼຸດ 7% ຕໍ່ປີ ຫຼື ເທົ່າກັບ 637 ຕື້ກີບ ຮອດປີ 2030;
- ການນຳເຂົ້າສິນຄ້າຈາກຕ່າງປະເທດ ບໍ່ໃຫ້ເກີນ 8% ຕໍ່ປີ ຫຼື ເທົ່າກັບ 388 ຕື້ກີບ ຮອດປີ 2030;
- ຈົດທະບຽນເຄື່ອງໝາຍການຄ້າ ໃຫ້ໄດ້ 10 ເຄື່ອງໝາຍ;
- ການຈໍລະຈອນສິນຄ້າພາຍໃນໃຫ້ຂະຫຍາຍຕົວສະເລ່ຍ 2% ຕໍ່ປີ ຂຶ້ນໄປ ຫຼື ເທົ່າກັບ 300 ຕື້ກີບ ເມື່ອຮອດປີ 2030.

2.3. ໂຍທາທິການ ແລະ ຂົນສົ່ງ

- ບູລະນະຮັກສາ ແລະ ສ້ອມແປງເສັ້ນທາງຫຼວງແຫ່ງຊາດ ໃຫ້ໄດ້ 85% ຂຶ້ນໄປ ແລະ ທາງຫຼວງທ້ອງຖິ່ນໃຫ້ໄດ້ 45% ຂຶ້ນໄປ;
- ສູ້ຊົນເຮັດໃຫ້ທາງປູຢາງເພີ່ມຂຶ້ນ 150 ກມ ແລະ ທາງຮ່ອມເບຕົງ ເພີ່ມຂຶ້ນ 10 ກມ ຂຶ້ນໄປ;
- ກໍ່ສ້າງລະບົບປ້ອງກັນການເຊາະເຈື່ອນຂອງຕາຝັ່ງແມ່ນ້ຳເຫືອງ (ແມ່ນ້ຳຊາຍແດນ) ໃຫ້ໄດ້ 16 ຈຸດ, ລວງຍາວ 22,82 ກິໂລແມັດ;
- ພັດທະນາລະບົບການຂົນສົ່ງທາງນ້ຳ (ພັດທະນາທ່າເຮືອ ໃຫ້ໄດ້ 1 ແຫ່ງ);
- ພັດທະນາລະບົບປ້ອງກັນຕາຝັ່ງເຈື່ອນແມ່ນ້ຳຂອງ, ແມ່ນ້ຳສາຂາ ແລະ ພັດທະນາລະບົບປ້ອງກັນໄພພິບັດນ້ຳຖ້ວມຕົວເມືອງ ໃຫ້ໄດ້ 2 ຕົວເມືອງ;
- ສ້າງລະບົບໂລຈິດສຕິກຕາມແລວທາງເສດຖະກິດ, ຢູ່ບັນດາດ່ານສາກົນໃຫ້ໄດ້ 4 ແຫ່ງ (ດ່ານສາກົນປາງມອນ, ດ່ານນ້ຳເງິນ, ດ່ານນ້ຳເຫືອງ ແລະ ດ່ານພູດູ່) ແລະ ສ້າງສະຖານີຄ່ຽນຖ່າຍສິນຄ້າ 1 ຈຸດ;
- ປັບປຸງຂະຫຍາຍສະຖານີຂົນສົ່ງໂດຍສານທາງບົກ ໃຫ້ໄດ້ 1 ແຫ່ງ;
- ບໍລິມາດການຂົນສົ່ງໂດຍສານ ໃຫ້ໄດ້ 680.000 ເທື່ອຄົນ/ປີ;



สแกนด้วย CamScanner

- ບໍລິມາດຂົນສົ່ງສິນຄ້າ ໃຫ້ໄດ້ 1.800.000 ໂຕນ/ປີ;
- ປັບປຸງຂະຫຍາຍສະໜາມບິນເທດສະບານແຂວງ ໃຫ້ສາມາດຮອງຮັບເຮືອບິນຂະໜາດນ້ອຍ, ຂະໜາດກາງ ເປັນປົກກະຕິ ພ້ອມທັງສຳຫຼວດສະໜາມບິນຂະໜາດໃຫຍ່ໃຫ້ຮອງຮັບໃນຕໍ່ໜ້າ;
- ພັດທະນາຕັດຜັງຕາໜ່າງເສັ້ນທາງຜັງເມືອງ ເບື້ອງທິດຕາເວັນອອກ, ຜັງພູທອກຂອງເທດສະບານ ແລະ ເຂດໜອງໄຜ່ ໃຫ້ໄດ້ 43,4 ກິໂລແມັດ;
- ພັດທະນາລະບົບໂຄງລ່າງຄອງລະບາຍນ້ຳໃນຕົວເມືອງເທດສະບານແຂວງ ໃຫ້ໄດ້ 5 ກິໂລແມັດ;
- ພັດທະນາຂະຫຍາຍຕົວເມືອງທີ່ທັນສະໄໝ, ອັດສະລິຍະ (Smartcity) ເຂດເສດຖະກິດສະເພາະໃຫ້ໄດ້ 1 ເຂດ;
- ປັບປຸງແຜນຜັງເທດສະບານເມືອງ ໃຫ້ໄດ້ 3 ເມືອງ;
- ພັດທະນາລະບົບໂຄງລ່າງຄອງລະບາຍນ້ຳໃນຕົວເມືອງ ຢູ່ບັນດາເມືອງທົ່ວແຂວງ ໃຫ້ໄດ້ 5 ກິໂລແມັດ.

2.4. ເຕັກໂນໂລຊີ ແລະ ການສື່ສານ

- ສ້າງມູນຄ່າການບໍລິການດ້ານໄປສະນີ ແລະ ຄົມມະນາຄົມໃຫ້ບັນລຸ 88 ຕື້ກີບ ຂຶ້ນໄປ ຕໍ່ປີ;
- ຂະຫຍາຍໂຄງລ່າງພື້ນຖານຕາໜ່າງໂທລະຄົມ ເຮັດໃຫ້ບ້ານທີ່ບໍ່ມີສັນຍານໄດ້ຮັບການແກ້ໄຂ 100%; ປັບປຸງດ້ານໂທລະຄົມມະນາຄົມ ໃຫ້ມີຄຸນນະພາບສູງ ສະເລ່ຍການນຳໃຊ້ ເລກໝາຍໂທລະສັບສະເລ່ຍ 100 ຄົນຕໍ່ 90 ໝາຍເລກຂຶ້ນໄປ;
- ຊຸກຍູ້ບັນດາບໍລິສັດທີ່ໃຫ້ການບໍລິການດ້ານໂທລະຄົມຂະຫຍາຍພື້ນຖານໂຄງລ່າງໂທລະຄົມມະນາຄົມ ເຂົ້າເຖິງທຸກເມືອງ ໃນທົ່ວແຂວງ, ສາຍກາບໄຍແສງ (Optic Fiber) 5 ປີໃຫ້ໄດ້ທັງໝົດ 100 ກິໂລແມັດ;
- ສູ້ຊົນຊຸກຍູ້ສົ່ງເສີມໃຫ້ບັນດາພະແນກການ ແລະ ເມືອງທີ່ມີເງື່ອນໄຂມີເວັບໄຊ້ (.gov.la) ໃຫ້ໄດ້ 05 ເວັບໄຊ້ຂຶ້ນໄປ.

3. ຄາດໝາຍດ້ານວັດທະນະທຳ-ສັງຄົມ

3.1 ຄາດໝາຍຂະແໜງສຶກສາທິການ ແລະ ກິລາ

- ອັດຕາເຂົ້າຮຽນຂອງເດັກ 5 ປີ ໃຫ້ໄດ້ 97%;
- ອັດຕາເຂົ້າໃໝ່ສຸດທິ ປ.1 ບໍ່ໃຫ້ຫຼຸດ 99%;
- ອັດຕາປະລະຊັ້ນປະຖົມ ບໍ່ໃຫ້ເກີນ 1,7%;
- ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ( ທຽບໃສ່ນັກຮຽນຕົ້ນປີ ປ.5 ) ໃຫ້ໄດ້ 89%;
- ອັດຕາເຂົ້າຮຽນລວມມັດທະຍົມຕອນຕົ້ນ ໃຫ້ໄດ້ 79%;
- ອັດຕາເຂົ້າຮຽນລວມມັດທະຍົມຕອນປາຍ ໃຫ້ໄດ້ 39%;
- ອັດຕາການປະລະມັດທະຍົມຕອນຕົ້ນ ບໍ່ໃຫ້ເກີນ 12%;
- ເປີເຊັນຂອງຄູປະຈຳການ ແລະ ຜູ້ເຮັດວຽກສຶກສານິເທດ ທຸກຊັ້ນໄດ້ຮັບວິຊາຊີບແບບຕໍ່ເນື່ອງ ໃຫ້ໄດ້ 35%;
- ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນ ໃຫ້ໄດ້ບຳລຸງຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ ໃຫ້ໄດ້ 800 ຄົນ;
- ຈຳນວນນັກສຶກສາທີ່ຈົບອາຊີວະສຶກສາ ແລະ ອົບຮົມວິຊາຊີບຕາມຫຼັກສູດທາງການ ໃຫ້ໄດ້ 100 ຄົນຂຶ້ນໄປ/ປີ;
- ຈຳນວນຫົວຂໍ້ຄົ້ນຄວ້າວິທະຍາສາດທີ່ນຳໃຊ້ເງິນກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ຕາມ 24 ຂົງເຂດບູລິມະສິດເພື່ອຮັບໃຊ້ ແຜນພັດທະນາເສດຖະກິດ-ສັງຄົມ 2026-2030 ໃຫ້ໄດ້ຢ່າງໜ້ອຍ 1 ຫົວຂໍ້;
- ສົ່ງເສີມທຸກເພດ, ທຸກໄວເຂົ້າຮ່ວມຫັດກາຍຍະບໍລິຫານ, ແຂ່ງຂັນກິລາ ປະຈຳປີ ແລະ ວັນສຳຄັນຕ່າງໆ ຂອງຊາດ ແລະ ສາກົນ ບໍ່ໃຫ້ຫຼຸດ 45% ຂອງປະຊາກອນທັງໝົດ.

3.2 ຄາດໝາຍຂະແໜງສາທາລະນະສຸກ

- ອັດຕາການເກີດລູກມີແພດຊ່ວຍ ເທົ່າກັບ 90% ຂອງກຸ່ມປະຊາກອນເປົ້າໝາຍ;



สแกนด้วย CamScanner

- ອັດຕາການໃຫ້ວັກຊີນກັນພະຍາດໃນເດັກລຸ່ມ 01 ປີ ເທົ່າກັບ 95% ຂອງກຸ່ມປະຊາກອນເປົ້າໝາຍ;
- ອັດຕາການປົກຄຸມການປິ່ນປົວພະຍາດວັນນະໂລກ ເທົ່າກັບ 90% ຂອງກຸ່ມປະຊາກອນເປົ້າໝາຍ;
- ອັດຕາການຕິດເຊື້ອໄຂ້ມາລາເຣຍ (ລວມທຸກຊະນິດເຊື້ອ) ເທົ່າກັບ 00 ກໍລະນີ ຂອງກຸ່ມປະຊາກອນເປົ້າໝາຍ;
- ອັດຕາຂອງປະຊາກອນ ຍິງ-ຊາຍ ທີ່ມີອາຍຸ 15-24 ປີ ມີຄວາມຮູ້ ຄວາມເຂົ້າໃຈ ການປ້ອງກັນການຕິດເຊື້ອ ເອັດສໄອວີ (HIV) ທີ່ຖືກຕ້ອງ ເທົ່າກັບ 80% ຂອງປະຊາກອນທັງໝົດ;
- ອັດຕາປົກຄຸມປະກັນສຸຂະພາບທົ່ວປວງຊົນ ເທົ່າກັບ 94,5% ຂອງປະຊາກອນທັງໝົດ.

3.3 ຄາດໝາຍຂະແໜງແຮງງານ ແລະ ສະຫວັດດີການສັງຄົມ

- ສູ້ຊົນ ຄວບຄຸມອັດຕາການວ່າງງານໃຫ້ຢູ່ໃນລະດັບບໍ່ເກີນ 2,5%;
- ພັດທະນາລະບົບຂໍ້ມູນ-ຂ່າວສານ ຕະຫຼາດແຮງງານໃຫ້ມີປະສິດທິພາບ ສາມາດເຊື່ອມຕໍ່ກັບລະບົບຂໍ້ມູນຂອງ 5 ຂະແໜງການ ທີ່ກ່ຽວຂ້ອງຂອງແຂວງ, ເມືອງ ແລະ ພາກສ່ວນທຸລະກິດ ໃຫ້ໄດ້ 25 ແຫ່ງ;
- ສູ້ຊົນເຮັດໃຫ້ກຳລັງແຮງງານລາວໄດ້ຮັບການຝຶກອົບຮົມ ແລະ ພັດທະນາສີມືແຮງງານ ມີການພັດທະນາສີມື, ຄວາມຊໍານານງານຫຼາຍຂຶ້ນ ໃຫ້ໄດ້ 3.700 ຄົນ;
- ສູ້ຊົນຈັດຫາງານພາຍໃນໃຫ້ກຳລັງແຮງງານລາວເຂົ້າເຮັດວຽກ ໃຫ້ໄດ້ 10.000 ຄົນ;
- ຂະຫຍາຍອັດຕາການປົກຄຸມປະກັນສັງຄົມ ໃຫ້ໄດ້ 21.939 ຄົນ;
- ສືບຕໍ່ປະຕິບັດນະໂຍບາຍ ຕາມດຳລັດ 57/ລບ, ລົງວັນທີ 27 ມັງກອນ 2025 ໃຫ້ຜູ້ທີ່ມີຄຸນງາມຄວາມດີໃນພາລະກິດຮັບໃຊ້ການປະຕິວັດຊາດ ປະຊາທິປະໄຕໃຫ້ໄດ້ຈໍານວນ 831 ທ່ານ;
- ສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ໃຫ້ໄດ້ 95%;
- ຂະຫຍາຍ ຄະນະກຳມະການຕາໜ່າງປົກປ້ອງເດັກຂັ້ນບ້ານ ໃຫ້ໄດ້ 95% ຂອງບ້ານທັງໝົດທົ່ວແຂວງ;
- ສູ້ຊົນປຸກລະດົມບໍລິຈາກເລືອດ ໃຫ້ໄດ້ 22.500 ຖົງ.

3.4 ຄາດໝາຍຂະແໜງວັດທະນະທຳ ແລະ ທ່ອງທ່ຽວ

- ສູ້ຊົນສ້າງຄອບຄົວວັດທະນະທຳ ໃຫ້ໄດ້ 2.500 ຄອບຄົວ ແລະ ສ້າງບ້ານວັດທະນະທຳ ໃຫ້ໄດ້ 15 ບ້ານ;
- ສູ້ຊົນສ້າງເມືອງວັດທະນະທຳ ໃຫ້ໄດ້ 1 ເມືອງ;
- ສູ້ຊົນຂຶ້ນທະບຽນມໍລະດົກທ້ອງຖິ່ນຂັ້ນແຂວງ ໃຫ້ໄດ້ 2 ແຫ່ງ;
- ສ້າງບ້ານວັດທະນະທຳຕົວແບບ ໃຫ້ກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວ ໃຫ້ໄດ້ 7 ບ້ານ;
- ສູ້ຊົນສ້າງຫໍພິພິດຕະພັນ ໃຫ້ໄດ້ 1 ແຫ່ງ;
- ສູ້ຊົນສ້າງຫ້ອງສະໝຸດ ໃຫ້ໄດ້ 1 ແຫ່ງ;
- ສູ້ຊົນດຶງດູດນັກທ່ອງທ່ຽວເຂົ້າມາຢ້ຽມຢາມ ແລະ ທ່ຽວຊົມແຂວງໄຊຍະບູລີ ໃຫ້ໄດ້ 135.000 ຄົນຕໍ່ປີ ແລະ ສ້າງລາຍຮັບຈາກການທ່ອງທ່ຽວໃນຮູບແບບກະຈາຍລາຍໄດ້ທົ່ວສັງຄົມ ໃຫ້ໄດ້ 6,7 ລ້ານໂດລາ ຕໍ່ປີ;
- ສູ້ຊົນພັດທະນາແຫຼ່ງທ່ອງທ່ຽວທີ່ເປັນບຸລິມະສິດ ໃຫ້ໄດ້ 3 ແຫ່ງ.

3.5 ຄາດໝາຍດ້ານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ

- ສູ້ຊົນສ້າງຄອບຄົວພົ້ນທຸກ ໃຫ້ໄດ້ 9.507 ຄອບຄົວ;
- ສ້າງບ້ານພົ້ນທຸກ ໃຫ້ບັນລຸ 28 ບ້ານ;
- ສ້າງຄອບຄົວພັດທະນາ ໃຫ້ໄດ້ 10.000 ຄອບຄົວ;
- ສ້າງບ້ານພັດທະນາ ໃຫ້ໄດ້ 42 ບ້ານ;
- ສ້າງເມືອງພົ້ນທຸກໃຫ້ໄດ້ 2 ເມືອງ ( ເມືອງໄຊຍະບູລີ ແລະ ເມືອງ ຊຽງຮ່ອນ);
- ສ້າງເມືອງເຂັ້ມແຂງຮອບດ້ານ ໃຫ້ໄດ້ 5 ເມືອງຄື: ເມືອງເງິນ, ເມືອງຫົງສາ, ເມືອງພຽງ, ເມືອງປາກລາຍ



สแกนด้วย CamScanner

ແລະ ເມືອງແກ່ນທ້າວ;

- ຈັດສັນພູມລຳເນົາ ແລະ ອາຊີບ ມີ 3 ຈຸດສຸມ ຄື: ຈຸດສຸມພັດທະນາຊົນນະບົດໃໝ່ນາລອມ ເມືອງໄຊຍະບູລີ, ຈຸດສຸມຈັດສັນພູມລຳເນົາ ແລະ ອາຊີບບ້ານນ້ຳພຽງ ເມືອງບໍ່ແຕນ ແລະ ຈຸດສຸມຈັດສັນພູມລຳເນົາ ແລະ ອາຊີບ ປາກເປັດ ເມືອງຊຽງຮ່ອນ;
- ສູ້ຊົນສ້າງຈຸດສຸມບູລິມະສິດຂອງສູນກາງ ແລະ ທ້ອງຖິ່ນ ໃຫ້ບັນລຸ 4 ຈຸດສຸມຄື: ຈຸດສຸມພັດທະນາຊົນນະບົດ ໃໝ່ 1 ຈຸດ (ນາລອມ ເມືອງໄຊຍະບູລີ); ຈຸດສຸມຈັດສັນພູມລຳເນົາ ແລະ ອາຊີບ 2 ຈຸດ (ຈຸດສຸມປາກເປັດ ເມືອງຊຽງຮ່ອນ ແລະ ຈຸດສຸມນ້ຳພຽງ ເມືອງບໍ່ແຕນ) ແລະ ຈຸດສຸມພັດທະນາວຽກງານປ້ອງກັນຊາດມີ 3 ຈຸດ (ເມືອງຊຽງຮ່ອນ, ເມືອງໄຊສະຖານ ແລະ ເມືອງບໍ່ແຕນ);
- ຂະຫຍາຍລະບົບຈຳໜ່າຍໄຟຟ້າ ໄປຫາບ້ານທີ່ຍັງບໍ່ໄດ້ຊົມໃຊ້ໄຟຟ້າ ຈຳນວນ 03 ບ້ານ.

4. ຄາດໝາຍດ້ານບົດບາດຍິງ-ຊາຍ

- ປະຕິບັດຍຸດທະສາດ ແລະ ວິໄສທັດແຕ່ນີ້ຮອດປີ 2030 ເພື່ອການພັດທະນາແບບຍືນຍົງ, ຄວາມສະເໝີພາບຍິງ-ຊາຍ, ລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ແລະ ຫຼຸດຜ່ອນຄວາມທຸກຍາກໃນຊຸມປີຕໍ່ໜ້າ ໃຫ້ໄດ້ 65%.
- ບັນຈຸສັບຊ້ອນພະນັກງານເພດຍິງເປັນພະນັກງານນຳພາ-ຄຸ້ມຄອງ ຂັ້ນແຂວງໃຫ້ໄດ້ 20%, ຂັ້ນເມືອງໃຫ້ໄດ້ 20%, ຂັ້ນບ້ານ ໃຫ້ໄດ້ 10%; ໂດຍສະເລ່ຍ ໃຫ້ກວມເອົາ 20% ຂອງຜູ້ໄດ້ຮັບຕຳແໜ່ງບໍລິຫານງານທັງໝົດ;
- ຂະຫຍາຍສະມາຊິກສະຫະພັນແມ່ຍິງ ໃນທຸກຂົງເຂດວຽກງານ ໃຫ້ໄດ້ 20% ຂຶ້ນໄປ.

5. ຄາດໝາຍດ້ານການຄຸ້ມຄອງບໍລິຫານລັດ

- ກຳນົດເຂດແດນເຊື່ອມຕໍ່ ເມືອງຕໍ່ເມືອງ ໃຫ້ສຳເລັດ 100%; ຕາແສງຕໍ່ຕາແສງ ໃຫ້ສຳເລັດ 100%; ບ້ານຕໍ່ບ້ານ ໃຫ້ສຳເລັດ 80% ຂອງບ້ານທັງໝົດ;
- ສ້າງແຂວງເປັນຫົວໜ່ວຍຍຸດທະສາດໃຫ້ສຳເລັດ;
- ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານໃຫ້ໄດ້ 91% ຂອງເມືອງທັງໝົດ;
- ສ້າງຕາແສງໃຫ້ໄດ້ 45 ຕາແສງ, ສ້າງບ້ານເປັນຫົວໜ່ວຍພັດທະນາໃຫ້ໄດ້ 90% ຂອງບ້ານທັງໝົດ.

ມາດຕາ 2 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດ

ກອງປະຊຸມເຫັນດີຮັບຮອງເອົາມາດຕະການ, ກົນໄກການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາ ຕາມການສະເໜີຂອງຄະນະກຳມະການປົກຄອງແຂວງ, ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດ ບັນດາຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ ໃຫ້ສາມາດບັນລຸໄດ້ຕາມ ຄາດໝາຍທີ່ວາງໄວ້, ສະພາປະຊາຊົນແຂວງ ສະເໜີ ຄະນະກຳມະການປົກຄອງແຂວງເອົາໃຈໃສ່ບາງມາດຕະການເພີ່ມເຕີມ ດັ່ງນີ້:

1. ເພີ່ມທະວີຄວາມເອົາໃຈໃສ່ ໃນການຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຂອງພັກ ສະໄໝທີ XII, ມະຕິກອງປະຊຸມໃຫຍ່ຂອງອົງຄະນະພັກແຂວງ ສະໄໝທີ VIII ກ່ຽວກັບ ວິໄສທັດການພັດທະນາ ຮອດປີ 2045, ຍຸດທະສາດການພັດທະນາ 10 ປີ (2026-2035), ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 5 ປີ (2026-2030) ໃຫ້ປະກົດຜົນເປັນຈິງ, ໂດຍສະເພາະ ການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງໃນໄລຍະໃໝ່ ດ້ວຍການນຳໃຊ້ທ່າແຮງຂອງທ້ອງຖິ່ນ ເຮັດໃຫ້ເສດຖະກິດມີສະຖຽນລະພາບ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ມີປະສິດທິພາບ, ປະສິດທິຜົນ, ມີຈຸດສຸມບູລິມະສິດ, ຕາມທິດສີຂຽວ ແລະ ຍືນຍົງ;
2. ສືບຕໍ່ປະຕິບັດມະຕິຂອງກອງປະຊຸມສະພາປະຊາຊົນແຂວງ ປະຈຳປີ 2026 ຄາດໝາຍຂອງແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ທີ່ຍັງມີຄວາມຄືບໜ້າໜ້ອຍ ໃຫ້ບັນລຸຕາມ



สแกนด้วย CamScanner

ແຜນການ, ສະເໜີໃຫ້ຄະນະກຳມະການປົກຄອງແຂວງສຸມໃສ່ແກ້ໄຂບັນຫາທີ່ເຄັ່ງຮ້ອນດ້ານເສດຖະກິດ-ສັງຄົມ ໃນປະຈຸບັນ ເປັນຕົ້ນ:

1.) ຄຸ້ມຄອງລາຄາສິນຄ້າ ແລະ ການສະໜອງສິນຄ້າ ທີ່ຈຳເປັນຕໍ່ການດຳລົງຊີວິດ ຂອງພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ແລະ ປະຊາຊົນ ບັນດາເຜົ່າ ໂດຍສະເພາະແມ່ນ: ນ້ຳມັນເຊື້ອໄຟ, ໄຟຟ້າ, ເຄື່ອງ ອຸປະໂພກ-ບໍລິໂພກ ໂດຍສືບຕໍ່ຈັດຕັ້ງປະຕິບັດມາດຕະການ ຕິດຕາມກວດກາໃຫ້ເຂັ້ມງວດ;

2.) ແກ້ໄຂບັນຫາເຄັ່ງຮ້ອນ ທາງດ້ານວັດທະນາທຳ-ສັງຄົມ ເປັນຕົ້ນ: (1) ແກ້ໄຂບັນຫາການຂາດຄູ, ຍົກສູງ ຄຸນນະພາບການຮຽນ-ການສອນ, ສະໜອງອຸປະກອນການຮຽນ-ການສອນໃຫ້ພຽງພໍ ໃນເຂດຫ່າງໄກສອກຫຼີກ, ການອຸດໜູນຢ່າງເໝາະສົມຕໍ່ຄູ-ແພດອາສາສະໝັກ; (2) ເອົາໃຈໃສ່ບໍລິການປິ່ນປົວສຸຂະພາບໃຫ້ມີ ຄຸນນະພາບ ແລະ ຄຸ້ມຄອງຄ່າບໍລິການ ໃຫ້ສົມເຫດສົມຜົນ; (3) ການພັດທະນາຍົກລະດັບສີມືແຮງງານ, ການສ້າງວຽກເຮັດງານທຳ, ການຂະຫຍາຍອັດຕາປົກຄຸມ ປະກັນສັງຄົມ;

3.) ສືບຕໍ່ເອົາໃຈໃສ່ ແກ້ໄຂປະກົດການຫຍໍ້ທໍ້ດ້ານສັງຄົມ ເປັນຕົ້ນ ບັນຫາຢາເສບຕິດ, ການມົ້ວສຸມນຳໃຊ້ຢາສູບໄຟຟ້າ, ດື່ມນ້ຳກະທ້ອມ, ຄໍລາເຈນ, ການຕົວະຍົວະຫຼອກລວງ, ຄ້າຂາຍເຖື່ອນ ແລະ ອື່ນໆ.

3. ຮີບຮ້ອນຈັດຕັ້ງປະຕິບັດການນຳໃຊ້ງົບປະມານໂຄງການລົງທຶນຂອງລັດ ປະຈຳປີ 2026 ທີ່ໄດ້ຮັບຮອງຈາກ ກອງປະຊຸມສະພາປະຊາຊົນແຂວງ ເພື່ອຊຸກຍູ້ແຜນການພັດທະນາຂອງແຂວງ ໃຫ້ບັນລຸຕາມຄາດໝາຍ; ດຶງດູດການລົງທຶນຂອງທຸກພາກສ່ວນເສດຖະກິດ ໃນຮູບແບບຕ່າງໆ ເພື່ອກໍ່ສ້າງ ແລະ ບູລະນະໂຄງລ່າງພື້ນຖານ ໃຫ້ມີຄວາມສະດວກ, ຄວບຄຸມລົດບັນທຸກສິນຄ້ານ້ຳໜັກເກີນ ແລະ ມີມາດຕະການ ຕໍ່ຜູ້ລະເມີດຢ່າງເຂັ້ມງວດ, ຮີບຮ້ອນກໍ່ສ້າງຕາຝັ່ງເຈື່ອນ ທີ່ເປັນຈຸດຫຼໍ່ແຫຼມຕາມຊາຍແດນ ແລະ ຈຸດທີ່ມີການເຊາະເຈື່ອນຢ່າງຮ້າຍແຮງໃຫ້ສຳເລັດ ໂດຍສະເພາະບັນດາໂຄງການທີ່ໄດ້ຮັບອະນຸມັດໄປແລ້ວ;

4. ສະເໜີໃຫ້ ຄະນະກຳມະການປົກຄອງແຂວງ ເອົາໃຈໃສ່ຈັດສັນເຂດຜະລິດຢ່າງມີຈຸດສຸມ, ມີຄວາມລະອຽດ ແລະ ຊັດເຈນ ໃນແຕ່ລະເມືອງ, ຊຸກຍູ້ສົ່ງເສີມການຜະລິດ ສະບຽງອາຫານເພື່ອຮັບໃຊ້ພາຍໃນໃຫ້ພຽງພໍ ແລະ ເປັນສິນຄ້າສົ່ງອອກເພີ່ມຂຶ້ນ, ຫັນຫົວໜ່ວຍການຜະລິດເປັນອຸດສາຫະກຳທັນສະໄໝ ສ້າງຖານລາຍຮັບໃໝ່, ຍົກສູງຄຸນນະພາບ, ສ້າງມູນຄ່າເພີ່ມ ແລະ ມີຜະລິດຕະພັນຂອງທ້ອງຖິ່ນໃຫ້ຫຼາຍຂຶ້ນ, ສົ່ງເສີມ ການຮ່ວມມືລະຫວ່າງ ພາກລັດ, ຊາວກະສິກອນ, ວິສາຫະກິດ, ສະຖາບັນຄົ້ນຄວ້າ, ທະນາຄານ, ຜູ້ຈຳໜ່າຍພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາເສດຖະກິດຊຸມຊົນໃຫ້ມີຄວາມເຂັ້ມແຂງ ແລະ ຈຳກັດການນຳເຂົ້າຜະລິດຕະພັນ ທີ່ສາມາດຜະລິດໄດ້ພາຍໃນ ຢ່າງເຂັ້ມງວດຂຶ້ນກວ່າເກົ່າ, ສົ່ງເສີມ ແລະ ສ້າງຄ່ານິຍົມ ໃນການຊົມໃຊ້ຜະລິດຕະພັນພາຍໃນ ແລະ ຊຸກຍູ້ການຄ້າພາຍໃນໃຫ້ເປັນຮູບປະທຳ;

5. ເອົາໃຈໃສ່ຄຸ້ມຄອງ, ສ້ອມແປງ ບັນດາໂຄງການຊົນລະປະທານ ເປັນຕົ້ນ: ຊົນລະປະທານນ້ຳໄຫຼເຂົ້າເອງເພື່ອຮັບປະກັນການສະໜອງນ້ຳ ໃຫ້ແກ່ການຜະລິດຂອງຊາວກະສິກອນ, ຄົ້ນຄວ້າສ້າງເງື່ອນໄຂ ແລະ ອຳນວຍຄວາມ ສະດວກ ພ້ອມທັງມີກົນໄກການສະໜອງສິນເຊື່ອ ໃຫ້ແກ່ຊາວກະສິກອນ, ຫົວໜ່ວຍທຸລະກິດ ທີ່ຜະລິດ ຝຸ່ນ, ປຸຍ, ແນວພັນ, ຢາຂ້າສັດຕູພືດ, ອຸປະກອນ ແລະ ເຄື່ອງມືເຂົ້າໃນການຜະລິດກະສິກຳ, ການປຸງແຕ່ງກະສິກຳ ແລະ ອຸດສາຫະກຳປຸງແຕ່ງ ທີ່ນຳໃຊ້ວັດຖຸດິບພາຍໃນ ສ້າງມູນຄ່າເພີ່ມ ຈຳໜ່າຍພາຍໃນ ຫຼຸດຜ່ອນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ລວມທັງສິນຄ້າເອກະລັກຂອງແຂວງ ຄຽງຄູ່ກັບການສະໜອງດ້ານເຕັກນິກວິຊາການ, ຮັບປະກັນການສະໜອງທຶນ ມີຈຸດສຸມ, ຖືກຕ້ອງກັບນະໂຍບາຍ ແລະ ເປັນກິດຈະການທີ່ຂະແໜງການສົ່ງເສີມ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ບັນດານິຕິກຳ ທີ່ລັດວາງອອກ;

6. ສືບຕໍ່ນຳໃຊ້ບັນດາເຄື່ອງມື ແລະ ຫັນເປັນທັນສະໄໝໃນການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍ ໃຫ້ ເປັນລະບົບຄົບຊຸດ, ລວມສູນ ແລະ ສາມາດເຊື່ອມຕໍ່ກັບທຸກຂະແໜງການ, ເອົາໃຈໃສ່ເກັບລາຍຮັບ ຈາກຖານລາຍຮັບທີ່ເປັນທ່າແຮງໃນປະຈຸບັນ ແລະ ຈາກຖານລາຍຮັບທີ່ສ້າງໃໝ່ໃຫ້ຄົບຖ້ວນ ຕາມລະບຽບກົດໝາຍ;



สแกนด้วย CamScanner

7. ສືບຕໍ່ຊຸກຍູ້ສົ່ງເສີມການນຳໃຊ້ເງິນກີບ, ຄຸ້ມຄອງການແລກປ່ຽນ ແລະ ໃຊ້ຈ່າຍ ເງິນຕາຕ່າງປະເທດ ໃຫ້ເຂັ້ມງວດ, ຄຸ້ມຄອງການນຳເຂົ້າເງິນຕາຈາກການສົ່ງອອກໃຫ້ຜ່ານລະບົບທະນາຄານ ໃຫ້ໄດ້ຫຼາຍຂຶ້ນ;
8. ເອົາໃຈໃສ່ປະຕິບັດກົດໝາຍດ້ານຊັບພະຍາກອນທຳມະຊາດ ແລະ ແກ້ໄຂບັນຫາສິ່ງແວດລ້ອມໃຫ້ໄດ້ຕາມກົດໝາຍ, ໂດຍສະເພາະ ການອອກໃບຕາດິນ, ຕິດຕາມກວດກາ ແລະ ປະເມີນຄືນການເຊົ່າ ແລະ ສຳ ປະທານທີ່ດິນ, ການຕິດຕາມກວດກາແຜນຄຸ້ມຄອງສິ່ງແວດລ້ອມຂອງໂຄງການລົງທຶນ, ເພີ່ມທະວີການຄຸ້ມຄອງ, ການຕິດຕາມກວດກາ ແລະ ປະເມີນຄືນວຽກງານປົກປັກຮັກສາປ່າໄມ້, ການບຸກລຸກປ່າໄມ້, ຄອບຄອງທີ່ດິນປ່າໄມ້ ທີ່ຜິດກົດໝາຍ, ເຂັ້ມງວດໃນການຄຸ້ມຄອງທີ່ດິນ 3 ປະເພດປ່າ ແນ່ໃສ່ ປົກປັກຮັກສາ, ອະນຸລັກທຳມະຊາດ, ລະບົບນິເວດ, ຊີວະນາໆພັນ ຕາມທິດສີຂຽວ ແລະ ຍືນຍົງ, ຍົກລະດັບເນື້ອທີ່ປົກຫຸ້ມປ່າໄມ້ໃຫ້ກວມເຖິງ 70% ຕາມກົດໝາຍທີ່ກຳນົດໄວ້;
9. ເອົາໃຈໃສ່ ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ແຜນການທົດແທນຄ່າເສຍຫາຍ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາຕ່າງໆ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດແຕ່ຫົວທີ ແລະ ຄົບຖ້ວນຕາມແຜນທີ່ໄດ້ກຳນົດ;
10. ເອົາໃຈໃສ່ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກເປັນຈຸດສຸມ, ເປັນບຸລິມະສິດ ເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ແລະ ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ໃຫ້ດີຂຶ້ນ ເປັນກ້າວໆ;
11. ເພີ່ມທະວີຄວາມສັກສິດໃນການຄຸ້ມຄອງລັດຄຸ້ມຄອງສັງຄົມດ້ວຍກົດໝາຍ, ເອົາໃຈໃສ່ປະຕິບັດກົດໝາຍຢ່າງຄວາມເຂັ້ມງວດ ແລະ ເດັດຂາດ, ເອົາໃຈໃສ່ແກ້ໄຂຜົນການກວດສອບ-ກວດກາ ໃຫ້ໄດ້ຢ່າງຂາດຕົວ ແລະ ເກັບລາຍຮັບທີ່ກວດພົບ ເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

1. ມອບໃຫ້ຄະນະກຳມະການປົກຄອງແຂວງ ຊີ້ນຳບັນດາພະແນກການ, ອົງການ ແລະ ບັນດາເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ, ບັນດາຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ ດຳເນີນການຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນີລັນ ຄຳພັນເພັງ



สแกนด้วย CamScanner